**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງປ້ອງກັນຄວາມສະຫງົບ

ຫ້ອງວ່າການກະຊວງ

ເລກທີ..53......./ຫວກ

ນະຄອນຫຼວງວຽງຈັນ, ວັນທີ.12..ກຸມພາ.....2026

# ແຈ້ງການ

**ເຖິງ:** ຫ້ອງການບັນດາກະຊວງ, ອົງການທຽບເທົ່າ, ສະພາແຫ່ງຊາດ, ອົງການປົກຄອງທ້ອງຖິ່ນຜູ້ປະກອບການ, ທະຫານ, ຕໍາຫຼວດ ແລະ ປະຊາຊົນບັນດາເຜົ່າ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ການຢຸດເຊົາອອກປຶ້ມສໍາມະໂນຄົວໃຫ້ພົນລະເມືອງລາວແບບເກົ່າ ແລະ ຫັນມານໍາໃຊ້ໜັງສືຢັ້ງຢືນຂໍ້ມູນສໍາມະໂນຄົວແທນ.

- ອີງຕາມ ດໍາລັດ ວ່າດ້ວຍຖານຂໍ້ມູນພົນລະເມືອງ ແລະ ບັດປະຈໍາຕົວ ສະບັບເລກທີ 526/ລບ, ລົງວັນທີ 04 ສິງຫາ 2025;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງສໍາມະໂນຄົວ ແລະ ບັດປະຈໍາຕົວພົນລະເມືອງ ສະບັບເລກທີ 1176/ປກສ, ລົງວັນທີ 03 ມິຖຸນາ 2025;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງຫ້ອງວ່າການກະຊວງປ້ອງກັນຄວາມສະຫງົບ ສະບັບເລກທີ 1689/ປກສ, ລົງວັນທີ 17 ກັນຍາ 2021;
- ອີງຕາມ ແຈ້ງການ ການຂໍຫັນການຈົດທະບຽນສໍາມະໂນຄົວແບບເກົ່າ ມາເປັນການຈົດທະບຽນສໍາມະໂນຄົວແບບເອເລັກໂຕຣນິກແບບທັນສະໄໝ ສະບັບເລກທີ 122/ຫສນຍ, ລົງວັນທີ 28 ມັງກອນ 2026.

ຫ້ອງວ່າການກະຊວງປ້ອງກັນຄວາມສະຫງົບ **ຂໍຖືເປັນກຽດແຈ້ງມາຍັງ** ຫ້ອງການບັນດາກະຊວງ, ອົງການທຽບເທົ່າ, ສະພາແຫ່ງຊາດ, ອົງການປົກຄອງທ້ອງຖິ່ນ, ຜູ້ປະກອບການ, ທະຫານ, ຕໍາຫຼວດ ແລະ ປະຊາຊົນບັນດາເຜົ່າ ໃນຂອບເຂດທົ່ວປະເທດ ຊາບດັ່ງນີ້:

1. ກະຊວງປ້ອງກັນຄວາມສະຫງົບ ໄດ້ຢຸດເຊົາການອອກປຶ້ມສໍາມະໂນຄົວໃຫ້ພົນລະເມືອງລາວແບບເກົ່າ ຫັນມາຈົດທະບຽນສໍາມະໂນຄົວແບບເອເລັກໂຕຣນິກແບບທັນສະໄໝ ແລະ ຫັນມານໍາໃຊ້ໜັງສືຢັ້ງຢືນຂໍ້ມູນສໍາມະໂນຄົວ(ແບບຟອມ ສຄ07) ຕາມລະບຽບຫຼັກການຂອງກະຊວງປ້ອງກັນຄວາມສະຫງົບ ແທນປຶ້ມສໍາມະໂນຄົວແບບເກົ່າ.
2. ສໍາລັບບຸກຄົນ ແລະ ຄອບຄົວທີ່ມີປຶ້ມສໍາມະໂນຄົວອອກໃຫ້ໃນໄລຍະຜ່ານມາ ກໍ່ຍັງສາມາດນໍາໃຊ້ໄດ້ຈົນກວ່າຈະມີແຈ້ງການລົບລ້າງ, ສ່ວນບຸກຄົນ ແລະ ຄອບຄົວ ທີ່ມີຂໍ້ມູນສໍາມະໂນຄົວຢູ່ໃນລະບົບເອເລັກໂຕຣນິກແລ້ວ ແມ່ນໃຫ້ນໍາໃຊ້ໜັງສືຢັ້ງຢືນຂໍ້ມູນສໍາມະໂນຄົວ ແທນປຶ້ມສໍາມະໂນຄົວແບບເກົ່າ.
3. ສໍາລັບພົນລະເມືອງຜູ້ທີ່ມີບັດປະຈໍາຕົວ ດິຈິຕ໋ອນ ແລ້ວ ສາມາດນໍາໃຊ້ບັດປະຈໍາຕົວ ດິຈິຕ໋ອນ ເປັນການຢັ້ງຢືນຕົວຕົນຂອງພົນລະເມືອງ ເພື່ອປະກອບທຸລະກໍາຕ່າງໆໄດ້ເຊັ່ນດຽວກັນ.



สแกนด้วย CamScanner

4. ພາກສ່ວນທີ່ສາມາດອອກໜັງສືຢັ້ງຢືນຂໍ້ມູນສໍາມະໂນຄົວ (ແບບຟອມ ສຄ07) ມີ 03 ພາກສ່ວນຄື: ① ກົມຄຸ້ມຄອງສໍາມະໂນຄົວ ແລະ ກໍ່ສ້າງຮາກຖານ; ② ກອງບັນຊາການ ປກສ ນະຄອນຫຼວງວຽງຈັນ, ປກສ ແຂວງ; ③ ບັນດາກອງບັນຊາການ ປກສ ເມືອງ-ປກສ ນະຄອນ ໃນຂອບເຂດທົ່ວປະເທດ.
5. ບັນດາກະຊວງ, ອົງການທຽບເທົ່າ, ອົງການປົກຄອງທ້ອງຖິ່ນທຸກຂັ້ນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ອໍານວຍຄວາມສະດວກໃນການປະກອບເອກະສານເຮັດທຸລະກໍາຕ່າງໆ.

ດັ່ງນັ້ນ, ຫ້ອງວ່າການກະຊວງປ້ອງກັນຄວາມສະຫງົບ ຈຶ່ງແຈ້ງມາເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

**ເຊັນແທນ ຫົວໜ້າຫ້ອງວ່າການກະຊວງ**

**ຮອງຫົວໜ້າ ຫ້ອງວ່າການ**

ກະຊວງປ້ອງກັນຄວາມສະຫງົບ
ຫ້ອງວ່າການກະຊວງ

**ພົຈວ. ອານຸເດດ ຄູນຄໍາ**



สแกนด้วย CamScanner

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 122 /ຫສນຍ

ນະຄອນຫຼວງວຽງຈັນ, ວັນທີ 28 ມັງກອນ 2026

# ແຈ້ງການ

ຮຽນ: ທ່ານ ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ທີ່ເຄົາລົບ.

ເລື່ອງ: ການຂໍຫັນການຈົດທະບຽນສຳມະໂນຄົວແບບເກົ່າ ມາເປັນການຈົດທະບຽນສຳມະໂນຄົວແບບເອເລັກໂຕຣນິກ ແບບທັນສະໄໝ.

- ອີງຕາມ ດຳລັດວ່າດ້ວຍ ການຈັດຕັ້ງ ແລະ ເຄື່ອນໄຫວຂອງ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 547/ນຍ, ລົງວັນທີ 26 ສິງຫາ 2025;
- ອີງຕາມ ຂໍ້ຕົກລົງວ່າດ້ວຍ ລະບຽບການ ແລະ ກົນໄກການເຮັດວຽກ ຂອງລັດຖະບານ ຊຸດທີ IX ສະບັບເລກທີ 41/ນຍ, ລົງວັນທີ 30 ເມສາ 2021;
- ອີງຕາມ ບົດລາຍງານ ຂອງກະຊວງປ້ອງກັນຄວາມສະຫງົບ ສະບັບເລກທີ 52/ປກສ, ລົງວັນທີ 25 ທັນວາ 2025;
- ອີງຕາມ ການຕົກລົງ ແລະ ຊີ້ນຳຂອງທ່ານ ນາຍົກລັດຖະມົນຕີ ຄັ້ງວັນທີ 31 ທັນວາ 2025.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງການຕົກລົງ ແລະ ຊີ້ນຳຂອງທ່ານນາຍົກລັດຖະມົນຕີ ມາຍັງທ່ານຊາບ ດັ່ງນີ້:

1. ເຫັນດີ ໃຫ້ກະຊວງປ້ອງກັນຄວາມສະຫງົບ ອອກແຈ້ງການຢຸດເຊົາການອອກປຶ້ມສຳມະໂນຄົວໃຫ້ພົນລະເມືອງລາວແບບເກົ່າ ແລະ ຫັນມານຳໃຊ້ ໜັງສືຢັ້ງຢືນຂໍ້ມູນສຳມະໂນຄົວ (ແບບຟອມ ສຄ 07) ຕາມລະບຽບການຂອງກະຊວງປ້ອງກັນຄວາມສະຫງົບ ເພື່ອປ່ຽນແທນການນຳໃຊ້ປຶ້ມສຳມະໂນຄົວແບບເກົ່າ.

2. ມອບໃຫ້ກະຊວງປ້ອງກັນຄວາມສະຫງົບ:

- ສົມທົບກັບພາກສ່ວນກ່ຽວຂ້ອງ ຄົ້ນຄວ້າສ້າງນິຕິກຳ ແລະ ລະບຽບການ ເປັນອັນລະອຽດ ກ່ຽວກັບວິທີການ, ຂັ້ນຕອນ ການຈົດທະບຽນສຳມະໂນຄົວແບບເອເລັກໂຕຣນິກທັນສະໄໝ ແລ້ວລາຍງານລັດຖະບານ ເພື່ອພິຈາລະນາ.
- ໃຫ້ສືບຕໍ່ແຈ້ງບຸກຄົນ ແລະ ຄອບຄົວ ທີ່ມີປຶ້ມສຳມະໂນຄົວແລ້ວ ແຕ່ຍັງບໍ່ທັນໄດ້ປ້ອນຂໍ້ມູນເຂົ້າໃນລະບົບຖານຂໍ້ມູນ ພົນລະເມືອງ ແລະ ບັດປະຈຳຕົວ ແມ່ນສາມາດນຳໃຊ້ປຶ້ມສຳມະໂນຄົວໄດ້ ໃນການປະກອບເອກະສານເຮັດທຸລະກຳຕ່າງໆ, ສ່ວນບຸກຄົນ ແລະ ຄອບຄົວ ທີ່ມີຂໍ້ມູນສຳມະໂນຄົວຢູ່ໃນລະບົບແລ້ວ ແມ່ນໃຫ້ນຳໃຊ້ ໜັງສືຢັ້ງຢືນຂໍ້ມູນສຳມະໂນຄົວ (ແບບຟອມ ສຄ 07) ປ່ຽນແທນ ຕາມການກຳນົດຂອງກະຊວງປ້ອງກັນຄວາມສະຫງົບ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ,

ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເຂັ້ງຄຳ ແກ້ວບຸນຈັນ

ບ່ອນນຳສົ່ງ

| | | |
|---|---|---|
| 1. | ທ່ານນາຍົກ-ຮອງນາຍົກລັດຖະມົນຕີ | 05 ສະບັບ |
| 2. | ທ່ານ ຫົວໜ້າຫ້ອງວ່າການສູນກາງພັກ | 01 ສະບັບ |
| 3. | ທ່ານ ຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ | 01 ສະບັບ |
| 4. | ຫ້ອງວ່າການສະພາແຫ່ງຊາດ | 01 ສະບັບ. |
| 5. | ຄະນະ ຫສນຍ ທ່ານລະ | 01 ສະບັບ |
| 6. | ສຳເນົາ | 01 ສະບັບ |

... 2 ໂທ: 021 254691 ... 5577 20.1.2026

สแกนด้วย CamScanner